# ການລົງທະບຽນສະມາຊິກ e-Gazette

(Registration for e-Gazette Membership)

ການລົງທະບຽນສະມາຊິກຂອງ e-Gazette ມີຂັ້ນຕອນລະອຽດ ຄືດັ່ງຕໍ່ໄປນີ້:

1. ເທິງໜ້າເວັບໄຊ ເລືອກກົດປຸ່ມເມົາສ ທີ່ລາຍການຄຳສັ່ງ “*ສະໝັກ*” ດັ່ງຮູບລຸ່ມນີ້:



2. ກະລຸນາຕື່ມລາຍລະອຽດຂໍ້ມູນ ຂອງຜູ້ສໝັກໃສ່ໃນແຕ່ລະຊ່ອງຕ່າງໆ (ເຄື່ອງໝາຍ '*' ແມ່ນຊ່ອງທີ່ຕ້ອງໄດ້ໃສ່ຂໍ້ມູນ) ຕາມຕົວຢ່າງຮູບລຸ່ມນີ້

- ***ອີເມລ****:* ໃສ່ອີເມລ ທີ່ຖືກຕ້ອງແລະໃຊ້ໄດ້ (ທ່ານສາມາດລັອກອິນເຂົ້າໄດ້) ປະຈຸບັນຂອງທ່ານ, ເຊັ່ນຕົວຢ່າງ: *your-email@gmail.com*
- ***ພິມ ອີເມລ ອີກຄັ້ງ****:* ກະລຸນາພິມ ອີເມລ ນັ້ນອີກຄັ້ງ ເພື່ອຢືນຢັນ
- ***ລະຫັດຜ່ານ****:* ໃສ່ລະຫັດຜ່ານ ທີ່ຕ້ອງການສຳລັບທ່ານເອງ
- ***ພິມ ລະຫັດຜ່ານ ອີກຄັ້ງ****:* ກະລຸນາພິມ ລະຫັດຜ່ານ ອີກຄັ້ງ ເພື່ອຢືນຢັນ
- ***ຫົວຂໍ້:*** ເລືອກນາມ, *ເຊັ່ນວ່າ ທ່ານ (Mr.) ຫລື ທ່ານ ນາງ (Ms.)*
- ***ຊື່:*** ພິມຊື່ຂອງທ່ານ
- ***ນາມສະກຸນ****.* ພິມນາມສະກຸນຂອງທ່ານ
- ***ເພດ:*** ເລືອກເພດ, *ເຊັ່ນວ່າ ເພດຊາຍ (Male) ຫລື ເພດຍິງ (Female)*
- ***ວັນເກີດ:*** ໃສ່ວັນເກີດທ່ານເອງ
- ***ເບີໂທ:*** ໃສ່ເບີໂທລະສັບ ຖ້າມີ (ຫລືບໍ່ໃສ່ ກໍ່ໄດ້)
- ***ເບີມືຖື:*** ໃສ່ເບີໂທລະສັບມືຖື ຖ້າມີ (ຫລືບໍ່ໃສ່ ກໍ່ໄດ້)
- ***ເບີແຟັກ:*** ໃສ່ເບີແຟັກ ຖ້າມີ (ຫລືບໍ່ໃສ່ ກໍ່ໄດ້)
- ***ເຕືອນ ທາງ SMS:*** ໃຫ້ແຈ້ງເຕືອນຜ່ານທາງ SMS (ໃຫ້ຂ້າມລາຍການນີ້ ໃນຄະນະນີ້ຍັງທົດລອງຢູ່)
- ***ເຕືອນ ທາງ ອີເມລ:*** ໃຫ້ແຈ້ງເຕືອນຜ່ານທາງ ອີເມລ
- ***ທີ່ຢູ່:*** ໃສ່ທີ່ຢູ່ປະຈຸບັນຂອງທ່ານ
- ***ເມືອງ:*** ໃສ່ເມືອງ
- ***ແຂວງ:*** ໃສ່ແຂວງ
- ***ທຸລະກິດຫລັກ:*** ເລືອກປະເພດ ຫລື ຂະແໜງການ ທຸລະກິດປະຈຸບັນ ຈາກລາຍການ, ເຊັ່ນວ່າ: ສົ່ງອອກ, ນຳເຂົ້າ, ຂົນສົ່ງ, ຍຸຕິທຳ, ອື່ນໆ ..
- ***ປະເທດ:*** ເລືອກປະເທດ (ປົກກະຕິແມ່ນ ສປປ ລາວ) ທີ່ທ່ານອາໃສຢູ່ ຈາກລາຍການ

- ***ກວດສອບ ລະຫັດ:*** ພິມຢ່າງຖືກຕ້ອງຕາມ ລະຫັດແຄບຈາ (Capcha Code) ທີ່ປະກົດຂື້ນມາປະຈຸບັນ ເທິງເວັບໄຊ, ຫລືຖ້າບໍ່ແນ່ໃຈ ທ່ານສາມາດ ກົດລາຍການຄຳສັ່ງ "Get a new code" ອີກຄັ້ງ ເພື່ອຂໍປ່ຽນ ລະຫັດແຄບຈາໃໝ່ ລົງໃສ່ໃນຊ່ອງຫວ່າງ ທີ່ກຳນົດໃຫ້
- ***ລົງທະບຽນ:*** ກົດປຸ່ມ ລົງທະບຽນ ເມື່ອເຫັນວ່າໄດ້ໃສ່ຂໍ້ມູນ ທຸກລາຍການ ເປັນທີ່ສົມບູນຮຽບຮ້ອຍແລ້ວ

ເຊິ່ງໃນຂັ້ນຕອນນີ້ ລະບົບຈະທຳການ ກວດເບິ່ງວ່າ ທຸກໆລາຍການທີ່ທ່ານ ໄດ້ໃສ່ເຂົ້າໄປແລ້ວນັ້ນ ຖືກຕ້ອງຕາມກຳນົດກົດເກນທີ່ໄດ້ວາງໄວ້ ຫລືບໍ່ ? ຖ້າຫາກລາຍການຂໍ້ມູນໃດ ທີ່ໄດ້ໃສ່ເຂົ້າໄປແລ້ວນັ້ນ ເກີດມີບັນຫາ ຫລື ຂໍ້ຜິດພາດ, ລະບົບກໍ່ຈະແຈ້ງເຕືອນເປັນຕົວອັກສອນສີແດງ ເພື່ອໃຫ້ຜູ້ໃຊ້ຮັບຮູ້ ແລະ ກວດເບິ່ງຂໍ້ມູນນັ້ນຄືນໃໝ່ ເພື່ອຈະແກ້ໄຂໃຫ້ຖືກຕ້ອງກ່ອນ ຈຶ່ງກົດປຸ່ມລົງທະບຽນ ຊ້ຳຄືນອີກ




ເບີມືຖື

ເບີ ແຟັກ

ເຕືອນ ທາງ ອີ ເມລ

ທີ່ຢູ່

ເມືອງ

ແຂວງ

ທຸລະກິດຫຼັກ *

ທະນາຄານ ▼

ປະເທດ *

Lao People's Democratic Republic ▼

ກວດສອບ ລະຫັດ

bsgigr

Get a new code

ລົງທະບຽນ

ກົດທີ່ນີ້ ເພື່ອຂໍລະຫັດແຄບຈາ ໃໝ່

3. ກະລຸນາຕື່ມລາຍລະອຽດຂໍ້ມູນ ຂອງຜູ້ສະໝັກໃສ່ໃນແຕ່ລະຊ່ອງຕ່າງໆ (ເຄື່ອງໝາຍ "*" ແມ່ນຊ່ອງທີ່ຕ້ອງໄດ້ໃສ່ຂໍ້ມູນ) ຕາມຕົວຢ່າງຮູບລຸ່ມນີ້

ຖ້າການລົງທະບຽນ ສຳເລັດເສັດສິ້ນ ກໍ່ຈະມີຂໍ້ຄວາມສະແດງອອກມາວ່າ "ຂອບໃຈ, ກະລຸນາກວດເບິ່ງ ອີເມລ ຂອງທ່ານ ເພື່ອຢືນຢັນ ການສະໝັກ". ເມື່ອທ່ານ ກວດເບິ່ງ ອີເມລ ກໍ່ຈະເຫັນຂໍ້ຄວາມ ທີ່ບະບົບ e-gazette ສົ່ງໄປໃຫ້ດັ່ງຮູບລຸ່ມນີ້.



ເມື່ອທ່ານ ກົດທີ່ປຸ່ມເຊື່ອມຕໍ່ (link) ເພື່ອຂໍຢືນຢັນການສະໝັກເປັນສະມາຊິກ ຈາກອີເມລຂອງທ່ານ ລະບົບກໍ່ຈະນໍາພາທ່ານກັບຄືນສູ່ ເວັບໄຊ e-gazette ໂດຍທັນທີ. ເຖິງຕອນນີ້ ທ່ານສາມາດທີ່ຈະລັອກອິນ ໂດຍໃຊ້ອີເມລ ແລະລະຫັດຜ່ານ ທີ່ທ່ານໄດ້ລະບຸໃນຂັ້ນຕອນການລົງທະບຽນ ເຂົ້າໃນພື້ນທີ່ສະມາຊິກ ຂອງ e-gazette ໄດ້ແລ້ວ. ເຊິ່ງພາຍຫລັງທີ່ໄດ້ ລັອກອິນເຂົ້າລະບົບສໍາເລັດໄປແລ້ວ, ຈະສັງເກດເຫັນວ່າ ລາຍການເມນູ "**ສະມາຊິກ**" ຈະເພີ່ມຂື້ນມາ ໃນລາຍການທີ່ 3 ດັ່ງທີ່ທ່ານ ເຫັນຈາກຮູບຂ້າງລຸ່ມນີ້.



4. ມາເຖິງຕອນນີ້ ຂັ້ນຕອນການສະໝັກເປັນສະມາຊິກ ໃກ້ຈະສົມບູນແລ້ວ ຍັງເຫລືອພຽງແຕ່ການ ເຂົ້າເລືອກຕິດຕາມຂ່າວສານ ທີ່ທ່ານມີຄວາມສົນໃຈສະເພາະ. ໂດຍທີ່ເລືອກລາຍການຍ່ອຍ "ຕິດຕາມຂ່າວສານ" ຈາກລາຍການ "ສະມາຊິກ" ກໍ່ຈະນຳພາທ່ານເຂົ້າສູ່ໜ້າ ຕິດຕາມຂ່າວສານ ຂອງສະມາຊິກ ດັ່ງຮູບຂ້າງລຸ່ມນີ້. ໃນໜ້ານີ້ທີ່ສາມາດເລືອກທີ່ຈະເພີ່ມລາຍການຕິດຕາມໃໝ່ ທີ່ທ່ານໃຫ້ຄວາມສົນໃຈ ຫລື ຍົກເລີກລາຍການຕິດຕາມເກົ່າ ທີ່ໄດ້ເລືອກໄວ້ກ່ອນນັ້ນ, ເຊິ່ງເມື່ອຮຽບຮ້ອຍແລ້ວ ທ່ານຈະຕ້ອງໄດ້ບັນທຶກລາຍການເຫຼົ່ານີ້ໄວ້ ໂດຍການກົດປຸ່ມ **ບັນທຶກຕິດຕາມ** ເພື່ອບັນທຶກລາຍການຕ່າງໆ ທີ່ທ່ານໄດ້ເລືອກໄວ້.



5. ເມື່ອທ່ານເປັນສະມາຊິກຂອງ e-gazette ໂດຍສົມບູນແລ້ວ, ແຕ່ຖ້າລືມລະຫັດຜ່ານ ເພື່ອຈະລັອກອິນ ເຂົ້າລະບົບ ທ່ານກໍ່ສາມາດຂໍປ່ຽນ ລະຫັດຜ່ານຊົ່ວຄາວ ຈາກລະບົບໄດ້ ໂດຍການກົດທີ່ ປຸ່ມເຊື່ອມຕໍ່ "**ລືມລະຫັດ**" ແລ້ວຈຶ່ງໃສ່ ອີເມລ ຂອງທ່ານລົງໃນຊ່ອງ *ອີເມລ* * ແລະກົດປຸ່ມ "**ສົ່ງ**" (ເບິ່ງຕາມຮູບຂ້າງລຸ່ມ).

ຈາກນັ້ນ ກະລຸນາກວດເບິ່ງ ອີເມລ ຂອງທ່ານແລະໃຊ້ ລະຫັດຜ່ານຊົ່ວຄາວ ທີ່ທາງລະບົບ e-gazette ສົ່ງໃຫ້ ເພື່ອຈະ ລັອກອິນ ເຂົ້າສູ່ພື້ນທີ່ ສະມາຊິກ. ຈາກນັ້ນ ຖ້າຕ້ອງການຈະປ່ຽນ ລະຫັດຜ່ານໃໝ່ ໂດຍຕັ້ງຄ່າລະຫັດຜ່ານດ້ວຍຕົນເອງ ກໍ່ເລືອກທີ່ລາຍການຍ່ອຍ "ປ່ຽນລະຫັດ" ຈາກລາຍການ "ສະມາຊິກ" ແລ້ວພິມລະຫັດຜ່ານໃໝ່ ທີ່ທ່ານຕ້ອງການ ແລະ ລະຫັດຜ່ານປະຈຸບັນທີ່ໃຊ້ .ລັອກອິນ ເຂົ້າມາ ແລ້ວກົດປຸ່ມ ບັນທຶກ.

